# ຄຳຖາມ ແລະ ຄຳຕອບ (Q&A) ກ່ຽວກັບ ການສັກຢາປ້ອງກັນໂຣກ ວາຣິແຊລລາ (ໝາກໃສ)

***Questions & Answers (Q&A) about Varicella (Chickenpox) Vaccination***

### ຖ. ໂຣກໝາກໃສ ແມ່ນຫຍັງ?

ຕ.ໂຣກໝາກໃສ ເປັນໂຣກທີ່ຕິດຕໍ່ງ່າຍທີ່ສຸດ ຊຶ່ງເກີດມາຈາກເຊື້ອໄວຣັສ ວາຣິແຊລລາ ຊີສເຕີຣ໌. ຕາມປົກກະຕິແລ້ວ ໂຣກນີ້ຈະເປັນໂຣກທີ່ບໍ່ຮ້າຍແຮງປານໃດແລະກິນລະຍະສັ້ນໃນເດັກທີ່ມີສຸຂພາບດີ. ເຖິງຢ່າງໃດກໍດີ, ມັນຈະເປັນ ໂຣກທີ່ຮ້າຍແຮງຂຶ້ນສຳລັບຜູ້ໃຫຍ່ ແລະ ອາດກໍ່ໃຫ້ເກີດເປັນໂຣກທີ່ຮ້າຍແຮງ ຈົນເຖິງແກ່ຊີວິດສຳລັບບຸກຄົນທີ່ມີພູມຕ້ານທານຕ່ຳ.

ຄົນປ່ວຍ1ໃນ5000ຄົນຈະເປັນໂຣກສມອງອັກເສບ ແລະປະມານ 3ໃນ100000 ຄົນຂອງຄົນທີ່ປ່ວຍດ້ວຍໂຣກນີ້ເສັຍຊີວິດ.

ການເປັນໂຣກນີ້ໃນລະຍະທີ່ຖືພາອາດເຮັດໃຫ້ເດັກທີ່ເກີດມາມີຮູບຮ່າງພິການໄດ້.

### ຖ. ລູກຂອງຂ້ອຍຄວນສັກຢາກັນໂຣກນີ້ບໍ?

ຕ. ສະພາ ການຄົ້ນຄວ້າ ດ້ານອະນາມັຍແລະການແພດ ແນະນຳໃຫ້ສັກຢາປ້ອງກັນໂຣກໝາກໃສຄັ້ງນຶ່ງໃຫ້ແກ່:

- ເດັກທຸກໆຄົນທີ່ມີອາຍຸ18ເດືອນ ນອກຈາກວ່າພວກເຂົາຈະໄດ້ສັກຢາປ້ອງກັນ ໂຣກໝາກໃສມາແລ້ວຄັ້ງນຶ່ງ ຫລື ເຄີຍມີປວັດວ່າເປັນໝາກໃສມາກ່ອນ.
- ເດັກທີ່ມີອາຍຸ10-13ປີ ນອກຈາກວ່າ ພວກເຂົາຈະໄດ້ສັກຢາປ້ອງກັນໂຣກໝາກໃສ ມາແລ້ວຄັ້ງນຶ່ງ ຫລື ເຄີຍມີປວັດວ່າເປັນໝາກໃສມາກ່ອນ.
- ໃນຣັດ ນຊວ ຢາສັກປ້ອງກັນໂຣກນີ້ ໄດ້ສັກໃຫ້ແກ່ພວກນັກຮຽນທີ່ຢູ່ຊັ້ນປີທຳອິດຂອງໂຮງຮຽນມັທຍົມ.

ເດັກທຸກໆຄົນທີ່ເຄີຍເປັນໂຣກໝາກໃສມາແລ້ວ ຖືວ່າເປັນຜູ້ມີພູມຕ້ານທານ ແລະ <u>ບໍ່ຕ້ອງ</u> ສັກຢາປ້ອງກັນອີກ.

### ຖ. ແມ່ນໃຜທີ່<u>ບໍ່</u>ຄວນໄດ້ຮັບການສັກຢາປ້ອງກັນໂຣກໝາກໃສ?

ຕ. ຢາສັກປ້ອງກັນໂຣກໝາກໃສ<u>ບໍ່</u>ຄວນສັກໃຫ້ແກ່:

- ບຸກຄົນທີ່ຖືພາ-ຄວນຫລີກເວັ້ນການຖືພານຶ່ງເດືອນຫລັງຈາກທີ່ໄດ້ສັກຢາ
- ບຸກຄົນທີ່ມີພູມຕ້ານທານຕ່ຳ ເຊັ່ນ:
  - (i) ບຸກຄົນທີ່ມີເອດສ໌
  - (ii) ບຸກຄົນທີ່ພວກໄດ້ຮັບ ຫລື ເຄີຍໄດ້ຮັບການບຳບັດດ້ວຍສເຕຣອຍດ໌ (ຮວມເຖິງການໃຊ້ສເຕຣອຍດ໌) ແລະ/ຫລື ການບຳບັດທີ່ເຮັດໃຫ້ພູມຕ້ານທານຕ່ຳ (ຮວມເຖິງແສງຣັງສີ) ພາຍໃນສາມເດືອນທີ່ຜ່ານມາ.
- ພວກທີ່ມີອາການແພ້ຢ່າງຮຸນແຮງຕໍ່ສ່ວນປະກອບອັນໃດອັນນຶ່ງຂອງຢາສັກ
- ບຸກຄົນທີ່ເຄີຍໄດ້ຮັບການປ່ຽນເລືອດ/ການສັກຢາສ້າງພູມຕ້ານທານ ພາຍໃນສາມເດືອນທີ່ຜ່ານມາ
- ບຸກຄົນທີ່ໄດ້ຮັບການສັກຢາທີ່ຕຽມໄວ້ຈາກເຊື້ອທີ່ມີຊີວິດ ພາຍໃນສີ່ອາທິດທີ່ຜ່ານມາ (ເຊັ່ນ ໄຂ້ໝາກເຫລືອງ, MMR, BCG ແລະ OPV).

### ຖ. ຖ້າລູກຂອງຂ້ອຍເປັນໂຣກຫືດ ແລະ ກິນຢາ ກອັກຕິໂຊນ ຫລື ເປຣັດນີໂຊລ ດ້ວຍການໃຊ້ "ອັນເປົ່າ" ເດ?

ຕ. ເປັນການປອດພັຍທີ່ຈະສັກຢາປ້ອງກັນໂຣກໝາກໃສໃຫ້ ເດັກນ້ອຍ ຖ້າພວກເຂົາໃຊ້ "ອັນເປົ່າ" ສຳລັບໂຣກຫືດ.

### ຖ. “Anaphylaxis” (ການແພ້ອັນຮຸນແຮງ) ແມ່ນຫຍັງ?

ຕ. “Anaphylaxis” ແມ່ນອາການແພ້ອັນຮຸນແຮງທີ່ອາດຈະເຮັດໃຫ້ສລົບ ແລະ ຕາຍໄດ້ ຖ້າບໍ່ປິ່ນປົວໃຫ້ໄວ. ມັນຈະເກີດໄດ້ຍາກທີ່ສຸດຫລັງຈາກການສັກຢາ. ພວກພຍາບານກໍໄດ້ຮັບການເຝິກຫັດມາແລ້ວເປັນຢ່າງດີໃນການປິ່ນປົວອາການແພ້ອັນຮຸນແຮງນີ້.

### ຖ. ສ່ວນປະກອບຂອງຢາສັກປ້ອງກັນໂຣກໝາກໃສມີຫຍັງແດ່?

ຕ. ຢາສັກນີ້ບັນຈຸ ໄວຣັສ ວາຣິແຊລລາ ຊີສເຕີຣ໌, ນ້ຳກົດ ອາມີໂນ, ທາດໄຂ່ຂາວທີ່ຢູ່ໃນມະນຸດ, ທາດນ້ຳຕານ, ນີໂອມີຊິນ ຊູລເຟຕ, ຊອັກຕິບອລ ແລະ ແມັນນີທອລ (ສິ່ງເພີ້ມຕື່ມໃຊ້ ໃນການເຮັດໃຫ້ຢາຄົງຕົວ).

### ຖ. ລູກຂອງຂ້ອຍຕ້ອງ ສັກຢາວາຣິແຊລລາຈັກຄັ້ງ ເພື່ອຈະປ້ອງກັນຈາກໂຣກ ໝາກໃສ?

ຕ. ເດັກທີ່ມີອາຍຸເຖິງ13ປີຕ້ອງສັກຢາວາຣິແຊລລາ ຄັ້ງນຶ່ງເພື່ອໃຫ້ມີພູມຕ້ານທານ

### ຖ. ລູກຂອງຂ້ອຍຈະຕ້ອງສັກຢາກະຕຸ້ນເພີ້ມຕື່ມຂອງຢາປ້ອງກັນໂຣກນີ້ບໍ?

ຕ. ໃນຂະນະນີ້ ຍັງບໍ່ມີການແນະນຳໃຫ້ສັກຢາກະຕຸ້ນເພີ້ມຕື່ມເທື່ອ

### ຖ. ອາການຂ້າງຄຽງຂອງການສັກຢາປ້ອງກັນໂຣກ ມີຫຍັງແດ່?

ຕ. ມີປະຕິກິຣິຍາພໍປານກາງ ເຊັ່ນ ເປັນໄຂ້(ສູງເຖິງ39ອົງສາ) ແລະ ເຈັບ ປວດຕາມບ່ອນສັກຢາ. ຕຸ່ມຄ້າຍໆກັບ"ໝາກໃສ" ຈະເກີດຂຶ້ນຫລັງຈາກ ສັກຢາ ໄດ້ 5 ຫາ 26 ມື້. ໃນຂນະທີ່ມີຕຸ່ມນີ້ ຄວນຫລີກເວັ້ນການສັມຜັດກັບຄົນທັງຫມົດ ໂດຍສະເພາະຜູ້ຍິງທີ່ຖືພາ.

### ຖ. ຂ້ອຍຄວນຈະເຮັດຢ່າງໃດ ຖ້າຂ້ອຍບໍ່ມີບັນທຶກ ຫລື ບໍ່ຈື່ວ່າລູກຂອງຂ້ອຍໄດ້ ສັກຢາປ້ອງກັນໂຣກໝາກໃສ ຫລື ວາຣິແຊລລາ ແລ້ວຫລືຍັງ?

ຕ. ເດັກແລະຜູ້ໃຫຍ່ສາມາດໄດ້ຮັບການສັກຢາວາຣິແຊລລາ ຖ້າບໍ່ແນ່ໃຈວ່າເຄີຍ ເຄີຍມີປວັດການເປັນໝາກໃສມາກ່ອນຫຼືບໍ່ ຫລືວ່າບໍ່ມີສິ່ງຢັ້ງຢືນການສັກຢາ ວາຣິແຊລລາ ມາກ່ອນ

### ຖ. ລູກຂອງຂ້ອຍເຄີຍເປັນໂຣກໝາກໃສມາແລ້ວຕອນເປັນເດັກ ລາວຕ້ອງສັກຢາ ອີກບໍ?

ຕ. ບໍ່ຕ້ອງ. ລູກຂອງທ່ານບໍ່ຕ້ອງໄດ້ຮັບການສັກຢາອີກ ຖ້າວ່າລາວເຄີຍເປັນໂຣກ ໝາກໃສມາແລ້ວ.



February 2006

**ຖ. ຂ້ອຍຈະເຮັດຢ່າງໃດ ຖ້າຂ້ອຍບໍ່ຢາກໃຫ້ລູກຂອງຂ້ອຍ ສັກຢາ ຢູ່ ໂຮງຮຽນ ຫລື ຖ້າລູກຂອງຂ້ອຍພາດຈາກການສັກຢາຢູ່ໂຮງຮຽນ ຍ້ອນ ວ່າເຈັບປ່ວຍ ຫລື ຂາດໂຮງຮຽນໃນມື້ທີ່ພວກພຍາບານມາ?**

ຕ.ທ່ານສາມາດພາລູກຂອງທ່ານໄປສັກຢາກັບນາຍໝໍໃນທ້ອງຖິ່ນຂອງທ່ານ ເພື່ອ ຮັບການສັກຢານີ້ໂດຍບໍ່ເສັຍຄ່າ.

**ຖ. ການສັກຢານີ້ເປັນການບັງຄັບສຳລັບການຮຽນມະຣິງນີ້ບໍ?**

ຕ. ບໍ່. ພວກພໍ່ແມ່ສາມາດເລືອກໄດ້ວ່າຈະເຊັນຟອ໌ມຍິນຍອມ ແລະ ໃຫ້ລູກຂອງພວກເຂົາສັກຢາ ຫລືບໍ່. ມີແຕ່ເດັກນ້ອຍ ທີ່ມີຟອ໌ມຍິນຍອມທີ່ໄດ້ຖືກ ຂຽນຕື່ມແລະເຊັນຮັບແລ້ວເທົ່ານັ້ນ ທີ່ຈະໄດ້ຮັບການສັກຢາ.

ເຖິງຢ່າງໃດກໍຕາມ, ຂໍໃຫ້ພໍ່ແມ່/ຜູ້ປົກຄອງ**ທຸກໆ**ຄົນອ່ານເບິ່ງຂໍ້ມູນທີ່ມີໃຫ້ ແລະ ສົ່ງຟອ໌ມຍິນຍອມຄືນມາໃຫ້ໂຮງຮຽນ ບໍ່ວ່າຈະເຊັນຮັບຫລືບໍ່ ເພື່ອວ່າພວກເຮົາ ຈະໄດ້ແນ່ໃຈວ່າ ພໍ່ແມ່/ຜູ້ປົກຄອງທຸກໆຄົນ ໄດ້ມີໂອກາດມີສ່ວນຮ່ວມ ໃນໂຄງການນີ້ແລ້ວ.

**ຖ. ຂ້ອຍຄວນໃຫ້ລູກຂອງຂ້ອຍກິນຢາ ພາຣາເຊຕາມອລ ກ່ອນໄປ ໂຮງຮຽນ ໃນມື້ສັກຢາບໍ?**

ຕ. ບໍ່. ມັນບໍ່ແມ່ນການຈຳເປັນ.

**ຖ. ສ່ວນປຸງ ແບບ ໂຮໂມໂອປາຕິກ (homoeopathic) ຈະປ້ອງກັນ ຈາກໂຣກໝາກໃສ ໄດ້ບໍ?**

ຕ. ບໍ່. ຍັງບໍ່ມີຫລັກຖານບອກວ່າ ສ່ວນປຸງແບບໂຮໂມໂອປາຕິກ ປ້ອງກັນໂຣກໝາກໃສໄດ້.

**ຖ. ຄວນສັກຢາກັນໂຣກນີ້ ແກ່ຍິງສາວທີ່ຖືພາ ຫລື ຄິດວ່າລາວອາດຈະຖືພາບໍ?**

ຕ. ບໍ່. ຍິງສາວຄົນໃດທີ່ຖືພາ ຫລື ຄິດວ່າລາວອາດຈະຖືພາ ບໍ່ຄວນສັກຢານີ້.

**ຖ. ຂ້ອຍຈະໄດ້ບັນທຶກການສັກຢາທີ່ລູກຂອງຂ້ອຍໄດ້ຮັບແລ້ວບໍ?**

ຕ. ລູກຂອງທ່ານຈະໄດ້ຮັບບັນທຶກການສັກຢາ. ມັນເປັນສິ່ງສຳຄັນທີ່ທ່ານຕ້ອງແຈ້ງໃຫ້ນາຍໝໍຂອງທ່ານໃຫ້ຊາບວ່າໄດ້ຮັບການສັກຢາແລ້ວ, **ເພາະວ່າ ທາງ ມະຫາວິທຍາລັຍ ວິທຍາລັຍ ບ່ອນເຮັດວຽກ ແລະ ປະເທດອື່ນໆ ຕ້ອງການ ຂໍ້ມູນນີ້ສເມີ.**
ກະຣຸນາເກັບຮັກສາບັນທຶກນີ້ໄວ້ຢູ່ໃນບ່ອນທີ່ປອດພັຍ ເພື່ອຈະໄດ້ໃຊ້ໃນຄາວໜ້າ.

**ຖ. ຂ້ອຍຈະຊອກຫາຂໍ້ມູນເພີ້ມຕື່ມໄດ້ຈາກໃສ?**

ຕ. ປື້ມຄູ່ມືການສັກຢາກັນໂຣກ ຂອງ ອອັສເຕຣເລັຍ(ສບັບປັດຈຸບັນ) ໃຫ້ຂໍ້ມູນ ອັນລະອຽດກ່ຽວກັບການສັກຢາປ້ອງກັນໂຣກ.
ທ່ານສາມາດເອົາໄດ້ທີ່: www.immunise.health.gov.au

**ຖ. ຂ້ອຍສາມາດຕິດຕໍ່ໃຜໄດ້ ຖ້າຂ້ອຍຢາກໄດ້ຂໍ້ມູນເພີ້ມຕື່ມ?**

ຕ. ຕິດຕໍ່ຜແນກ ອະນາມັຍຊຸມຊົນ ໃນທ້ອງຖິ່ນຂອງທ່ານ ທີ່:

**Greater Southern** (ເຂດໃຕ້)
(02) 6124 9942 ຫລື (02) 6021 4799
ຫ້ອງການ Queanbeyan ຫ້ອງການ Albury

**Greater Western** (ເຂດ ຕະເວັນຕົກ)
(02) 6339 5601 ຫລື (02) 6841 5569
ຫ້ອງການ Bathurst ຫ້ອງການ Dubbo
(08) 8080 1499
ຫ້ອງການ Broken Hill

**Hunter & New England** (ເຂດ ຮັນເຕີຣ໌ **&** ນິວອິງແລນດ໌)
(02) 4924 6477 ຫລື (02) 6767 8630
ຫ້ອງການ Newcastle ຫ້ອງການ Tamworth

**North Coast** (ນອຣ໌ຕ ໂຄສ໌ຕ)
(02) 6588 2750 ຫລື (02) 6620 7500
ຫ້ອງການPort Macquarie ຫ້ອງການ Lismore

**Northern Sydney & Central Coast**
(ເຂດ ນອຣ໌ຕເທີນ ຊິດນີ **&** ເຊັນທຣາລ ໂຄສ໌ຕ)
(02) 9477 9400 ຫລື (02) 4349 4845
ຫ້ອງການ Hornsby ຫ້ອງການ Gosford

**South Eastern Sydney & Illawarra**
(ຊິດນີຕະເວັນອອກສ່ຽງໃຕ້ ແລະ ອິລລາວາຣາ)
(02) 9382 8333 ຫລື (02) 4221 6700
ຫ້ອງການ Randwick ຫ້ອງການ Wollongong

**Sydney South West** (ຊິດນີ ຕະເວັນອອກສ່ຽງໃຕ້)
(02) 9828 5944 ຫລື (02) 9515 9420
ຫ້ອງການ Liverpool ຫ້ອງການ Camperdown

**Sydney West**
(02) 9840 3603 **or** (02) 4734 2022
ຫ້ອງການ Parramatta ຫ້ອງການ Penrith

ຫລືເປີດອິນເຕີເນັຕທີ່: www.health.nsw.gov.au

NSW HEALTH

IMMUNISE AUSTRALIA PROGRAM
An Australian, State and Territory Governments initiative

## ຂໍ້ມູນ ກ່ຽວກັບ ໂຣກ ຫມາກໃສ

ໂຣກ ຫມາກໃສ ເກີດມາຈາກເຊື້ອໄວຣັສທີ່ຕິດຕໍ່ງ່າຍທີ່ສຸດຊຶ່ງກໍ່ໃຫ້ເກີດມີອາການໄຂ້ຕົວຮ້ອນ ແລະມີຕຸ່ມ. ການມີໂຣກຫມາກໃສອີກຄັ້ງນຶ່ງຫລັງຈາກທີ່ເຄີຍເປັນແລ້ວ ຈະເປັນການກະຕຸ້ນໃຫ້ເປັນໂຣກ ງູສວັດ (ໄວຣັສ herpes zoster).

1ໃນ5000ຄົນ ຈະເປັນໂຣກສມອງອັກເສບ ແລະ ປະມານ **3**ໃນ100000ຄົນຂອງຄົນ ທີ່ປ່ວຍດ້ວຍໂຣກນີ້ເສັຍຊີວິດ.

ການເປັນໂຣກນີ້ໃນລະຍະທີ່ຖືພາອາດເຮັດໃຫ້ເດັກທີ່ເກີດມາມີຮູບຮ່າງພິການໄດ້. ແມ່ທີ່ເປັນໂຣກນີ້ກ່ອນຄອດລູກ ອາດເຮັດໃຫ້ລູກທີ່ເກີດມາເປັນໂຣກນີ້ນຳ.

## ອາການຂ້າງຄຽງ ຂອງ ການສັກຢາກັນໂຣກ ວາຣິແຊລລາ

ອາການຕ່າງໆທີ່ເກີດຂື້ນຫລັງຈາກການສັກຢາກັນໂຣກ ວາຣິແຊລລາ ນີ້ ຈະກິນເວລາພຽງບໍ່ເທົ່າໃດມື້ ແລະ ຕາມປົກກະຕິແລ້ວຈະມີພຽງເລັກນ້ອຍເທົ່ານັ້ນ. ອາການເຫລົ່ານີ້ຮວມເຖິງອາການເຈັບປວດຢູ່ບ່ອນສັກຢາ ແລະ ເປັນໄຂ້ຫນ້ອຍນຶ່ງ.

ໃນ3-5 ເປີເຊັນ ຂອງຜູ້ທີ່ມີພູມຕ້ານທານຈະມີອາການເປັນຕຸ່ມຄ້າຍໆຫມາກໃສຫນ້ອຍນຶ່ງ. ພວກເດັກນ້ອຍທີ່ມີຕຸ່ມຫມາກໃສນີ້ ຄວນຫລີກເວັ້ນການຢູ່ໃກ້ຊິດກັບຜູ້ທີ່ຂາດພູມຕ້ານທານ ແລະ ຜູ້ຍິງທີ່ຖືພາ.

ອານການຂ້າງຄຽງທີ່ຮ້າຍແຮງ (ເຊັ່ນອາການແພ້ທີ່ຮຸນແຮງ) ຈະເກີດຂື້ນຍາກທີ່ສຸດ.

## ຈະເຮັດແນວໃດຖ້າມີອາການຕ່າງໆເກີດຂື້ນ

ເອົາຜ້າຊຸບນ້ຳເຢັນໃສ່ບ່ອນທີ່ເຈັບ ອາດຈະຊ່ວຍຜ່ອນຄາຍຄວາມເຈັບປວດ ແລະ ອາການອອກຮ້ອນໄດ້. ທ່ານອາດເອົາຢາພາຣາເຊຕາມອລໃຫ້ກິນແກ້ປວດໄດ້. ໃຫ້ດື່ມນ້ຳຫລາຍຂື້ນ.

ຖ້າລູກຂອງທ່ານເຈັບປວດຍ້ອນອາການໃດອາການນຶ່ງ ຫລື ທ່ານເປັນກັງວົນ ກະຣຸນາຕິດຕໍ່ນາຍຫມໍໃນທ້ອງຖິ່ນຂອງທ່ານ.



# ການຍິນຍອມ ສຳລັບ ການສັກຢາກັນໂຣກ ວາຣິແຊລລາ (ຫມາກໃສ)

***Consent for Varicella (Chickenpox) Vaccination***

ພໍ່ແມ່/ຜູ້ປົກຄອງ ທີ່ຮັກແພງ,

ຄນະພຍາບານ ທີ່ໄດ້ຜ່ານການອົບຮົມມາໂດຍສະເພາະ ຈະມາຢ້ຽມຢາມໂຮງຮຽນຂອງລູກທ່ານເພື່ອໃຫ້ການສັກຢາກັນໂຣກ ວາຣິແຊລລາ ໃຫ້ຟຣີ.

ການສັກຢາກັນໂຣກຫມາກໃສໄດ້ຖືກແນະນຳ ໃຫ້ສັກແກ່ເດັກນ້ອຍອາຍຸ12ປີທຸກໆຄົນທີ່ຢູ່ໃນ ຣັຖນຊວ ນອກຈາກວ່າ ພວກເຂົາເຄີຍໄດ້ສັກຢາມາແລ້ວ ຫລື ເຄີຍເປັນຫມາກໃສມາແລ້ວ.

ຖ້າທ່ານຢາກໃຫ້ລູກຂອງທ່ານສັກຢານີ້ ກະຣຸນາ ຂຽນຕື່ມທຸກໆສ່ວນຂອງ ຟອຣ໌ມການຍິນຍອມນີ້ ແລະ ສົ່ງກັບໄປໃຫ້ໂຮງຮຽນ.

ພວກພຍາບານຈະກວດເບິ່ງລູກຂອງທ່ານໃນມື້ທີ່ເປີດຄລີນິກສັກຢານີ້. ພວກເດັກນ້ອຍທີ່ມີອາການເຈັບປ່ວຍຢ່າງຮ້າຍແຮງທີ່ມີໄຂ້ນຳ ຈະບໍ່ຖືກສັກຢານີ້.

ຖ້າທ່ານມີຄຳຖາມໃດໆກ່ຽວກັບການສັກຢາປ້ອງກັນໂຣກວາຣິແຊລລາຫລື ການຂຽນຕື່ມຟອຣ໌ມນີ້ ກະຣຸນາຕິດຕໍ່ ພແນກອະນາມັຍຊຸມຊົນ ໃນທ້ອງຖິ່ນຂອງທ່ານ (ມີຢູ່ໃນ Q&A ໃນ *"ປື້ມຄູ່ມືຂໍ້ມູນສຳລັບພໍ່ແມ່"*).

## ຄຳແນະນຳ:

ກະຣຸນາຂຽນຕື່ມຟອຣ໌ມນີ້ທຸກໆສ່ວນດ້ວຍປາກກາສີຟ້າ ຫລື ສີດຳ.

ໃບອັດສຳເນົາຂອງຟອຣ໌ມນີ້ຈະບໍ່ຖືກຮັບ.

ຖ້າທ່ານຕ້ອງການໃຫ້ລູກທ່ານໄດ້ຮັບການສັກຢາ, ຈົ່ງຂຽນຕື່ມ ທຸກໆ ສ່ວນຂອງຟອຣ໌ມນີ້ ແລະ ສົ່ງກັບຄືນໄປໃຫ້ໂຮງຮຽນ ພາຍໃນນຶ່ງອາທິດ.

ຖ້າທ່ານ ບໍ່ຕ້ອງການ ໃຫ້ລູກທ່ານໄດ້ຮັບການສັກຢາ ບໍ່ຕ້ອງ ສົ່ງຟອຣ໌ມນີ້ຄືນໄປ.

IMMUNISE AUSTRALIA PROGRAM
An Australian, State and Territory Governments initiative

NSW HEALTH

February 2006

## ຟອຣ໌ມການຍິນຍອມ ສຳລັບການສັກຢາກັນໂຣກ ວາຣິແຊລລາ (ໝາກໃສ)
*Varicella (Chickenpox) Vaccination Consent Form*

### ພໍ່ແມ່/ຜູ້ປົກຄອງ ຕ້ອງຂຽນຕື່ມ

| | | | |
|---|---|---|---|
| ນາມສະກຸນ ຂອງເດັກ | | | |
| ຊື່ຂອງເດັກ | | ວັນ ເດືອນ ປີເກີດ | / / |
| ຊື່ໂຮງຮຽນ | | | |
| ປີ/ຊັ້ນຮຽນ | | | |

ຂ້ອຍໄດ້ອ່ານແລະໄດ້ເຂົ້າໃຈຂໍ້ມູນທີ່ເອົາໃຫ້ກ່ຽວກັບຜົນປະໂຍດ ແລະ ທາງທີ່ອາດຈະມີອາການຂ້າງຄຽງຂອງການສັກຢາປ້ອງກັນໂຣກ ວາຣິແຊລລາ(ໝາກໃສ) ແລະ ຂ້ອຍກໍຍິນຍອມໃຫ້ລູກຂອງຂ້ອຍທີ່ມີຊື່ຢູ່ຂ້າງເທິງນີ້ ສັກຢານີ້.

ຂ້ອຍຂໍແຈ້ງວ່າ ລູກຊາຍ/ລູກສາວ/ຜູ້ຢູ່ໃນຄວາມປົກຄອງຂອງຂ້ອຍ

- (ກ) ບໍ່ເຄີຍມີອາການແພ້ອັນຮຸນແຮງຫລັງຈາກການສັກຢາ ໃດໆ
- (ຂ) ບໍ່ມີຄວາມຮູ້ສຶກແພ້ອັນຮຸນແຮງຕໍ່ສ່ວນປະກອບໃດໆຂອງຢາສັກກັນໂຣກວາຣິແຊລລາ (ດັ່ງທີ່ຂຽນບອກໄວ້ຢູ່ໃນພາກ (Q&A) ຂອງປຶ້ມຄູ່ມື *ຂໍ້ມູນສຳລັບພໍ່ແມ່*)
- (ຄ) ບໍ່ໄດ້ປ່ວຍດ້ວຍໂຣກທີ່ເຮັດໃຫ້ພູມຕ້ານທານຕໍ່າລົງ (ໂຣກມະເຮັງເມັດເລືອດຂາວ/ເອດສ໌)
- (ງ) ບໍ່ໄດ້ຮັບການຮັກສາດ້ວຍຢາ ກອັກຕິໂຊນ/ເປຣັດນີໂຊນ ຫລື ດ້ວຍການບຳບັດທີ່ເຮັດໃຫ້ພູມຕ້ານທານຕໍ່າ ຮວມເຖິງ ຣັງສີບຳບັດ.
- (ຈ) ບໍ່ມີອາການແພ້ຕໍ່ຢາປະຕິຊີວະນະ ນີໂອມີຊິນ
- (ສ) ບໍ່ໄດ້ເຄີຍມີການປ່ຽນເລືອດ/ການສັກຢາທີ່ກ່ຽວກັບພູມກັນໂຣກ ພາຍໃນສາມເດືອນທີ່ຜ່ານມາ
- (ຊ) ບໍ່ໄດ້ຖືພາ
- (ຍ) ບໍ່ໄດ້ສັກຢາກັນໂຣກຊະນິດທີ່ກຽມໄວ້ຈາກເຊື້ອໂຣກທີ່ມີຊີວິດ ພາຍໃນສີ່ອາທິດທີ່ຜ່ານມາ (ຕົວຢ່າງ ໄຂ້ໝາກເຫລືອງ, MMR, BCG ແລະ OPV)

| | | | |
|---|---|---|---|
| ຊື່ ພໍ່ແມ່/ຜູ້ປົກຄອງ | | | |
| ລາຍເຊັນຂອງພໍ່ແມ່/ຜູ້ປົກຄອງ | | | |
| ທີ່ຢູ່ | | | |
| ຄຸ້ມ | | ຣະຫັດໄປສະນີ | |
| ໂທຣະສັບ ເຮືອນ | | ບ່ອນເຮັດວຽກ | |
| ມືຖື | | ວັນທີ | / / |

ກະລຸນາ ຂຽນຕື່ມ ຟອມຍິນຍອມ ຕົວຢ່າງເທົ່ານັ້ນ ທີ່ ເປັນສິດ ຂອງກົດ

### ສຳລັບຫ້ອງການໃຊ້ເທົ່ານັ້ນ – ພຍາບານ ຕ້ອງຂຽນຕື່ມ ແລະ ເກັບສ່ວນນີ້ໄວ້

| | | | |
|---|---|---|---|
| ລາຍເຊັນ | | ກາປະທັບ | |
| ເບີປະຈຳຕົວ | | | |
| ແຂນຊ້າຍ | | ແຂນຂວາ | |

## ບັນທຶກ ການສັກຢາກັນໂຣກ ວາຣິແຊລລາ (ໝາກໃສ)
*Varicella (Chickenpox) Record of Vaccination*

### ພໍ່ແມ່/ຜູ້ປົກຄອງ ຕ້ອງຂຽນຕື່ມ

| | |
|---|---|
| ນາມສະກຸນ ຂອງເດັກ | |
| ຊື່ຂອງເດັກ | |
| ຊື່ໂຮງຮຽນ | |

### ສຳລັບ ຫ້ອງການໃຊ້ ເທົ່ານັ້ນ

| | | | |
|---|---|---|---|
| ແຂນຊ້າຍ | | ແຂນຂວາ | |
| ນຳເບີຂອງຢາສັກ | | | |
| ຫ້ອງການ ອະນາມັຍ ນຊວ/ວັນທີ/ເວລາ | | | |
| ລາຍເຊັນຂອງພຍາບານ | | | |

## ຄຳແນະນຳ:

ພວກຜູ້ຍິງທີ່ໄດ້ສັກຢາປ້ອງກັນໂຣກວາຣິແຊລລາແລ້ວບໍ່ຄວນຖືພາຫລັງຈາກການ ສັກຢາໄດ້ 28ມື້.

ກະຣຸນາເກັບບັນທຶກການສັກຢານີ້ໄວ້ ເພາະວ່າທ່ານອາດຕ້ອງການໃຊ້ເພື່ອໃນການໃຫ້ຂໍ້ມູນໃນພາຍຫລັງ.

ຈົ່ງແຈ້ງໃຫ້ນາຍໝໍຂອງທ່ານຊາບເຖິງມື້ທີ່ລູກທ່ານໄດ້ຮັບການສັກຢານີ້ ເພື່ອວ່າບັນທຶກສຸຂພາບຂອງລູກທ່ານຈະໄດ້ມີຂໍ້ມູນທີ່ຖືກຕ້ອງ.